ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການ

ເລກທີ 2890 /ຫກ

ນະຄອນຫລວງວຽງຈັນ, ວັນທີ 10 ຕຸລາ 2022

# ແຈ້ງການປະມູນ

ເຖິງ: ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ.

ເລື່ອງ: ການປະມູນຂາຍໄມ້ຂອງລັດ.

- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ (ສະບັບປັບປຸງ) ສະບັບເລກທີ 14/ສພຊ, ລົງວັນທີ 5 ກໍລະກົດ 2012;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ ສະບັບເລກທີ 6118/ກງ, ລົງວັນທີ 10 ທັນວາ 2021;
- ອີງຕາມ ໃບອະນຸຍາດຕັດໄມ້ທຳມະຊາດ (ໄມ້ທີ່ເກີດຢູ່ໃນດິນທີ່ມີກຳມະສິດຖືກຕ້ອງ) ສະບັບເລກທີ 1838/ກປ.ນອ, ລົງວັນທີ 25 ເມສາ 2022;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງຊັບສິນແຫ່ງລັດ ສະບັບເລກທີ 3145/ຄຊລ, ລົງວັນທີ 06 ຕຸລາ 2022.

ຫ້ອງການກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນຊາບວ່າ: ປະຈຸບັນ ກະຊວງການເງິນ ມີຈຸດປະສົງສະສາງໄມ້ປະເພດໄມ້ດູ່ ຈຳນວນ 29 ຕົ້ນ ບໍລິມາດ 8,507 ແມັດກ້ອນ ທີ່ນອນຢູ່ໃນທີ່ດິນຂອງລັດ ທີ່ລັດໄດ້ໃຫ້ບຸກຄົນເຊົ່າ ຢູ່ບ້ານໂພນໄຊຄຳ ເມືອງໄຊທານີ ນະຄອນຫຼວງວຽງຈັນ, ດ້ວຍຮູບການປະມູນແບບເປີດກ້ວາງ.

ຫາກທ່ານໃດມີຄວາມສົນໃຈຢາກເຂົ້າຮ່ວມປະມູນແຂ່ງຂັນລາຄາ ສອບຖາມລາຍລະອຽດ, ຕິດຕໍ່ ແລະ ຊື້ຊອງປະມູນໃນລາຄາ 300,000 ກີບ ໄດ້ທີ່ພະແນກຄຸ້ມຄອງຂໍ້ມູນຊັບສິນແຫ່ງລັດ ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ແລະ ເບິ່ງໄມ້ຕົວຈິງໄດ້ທີ່ບ້ານໂພນໄຊຄຳ ເມືອງໄຊທານີ ນະຄອນຫຼວງວຽງຈັນ ຕາມວັນ ແລະ ເວລາລັດຖະການ.

ການຂາຍຊອງປະມູນແມ່ນເລີ່ມແຕ່ວັນທີ 17.10.2022 ຫາວັນທີ 2.11.2022 (ວັນ ແລະ ເວລາລັດຖະການ) ໂດຍການເປີດຊອງປະມູນຊ່ອງໜ້າຄະນະກຳມະການ ແລະ ຜູ້ເຂົ້າຮ່ວມປະມູນ ໃນວັນທີ 2.11.2022 ເວລາ: 14:00 ໂມງ, ທີ່ຫ້ອງປະຊຸມຊັ້ນ 4 ກະຊວງການເງິນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຜູ້ທີ່ມີຄວາມສົນໃຈຢາກເຂົ້າຮ່ວມປະມູນຊາບ.

ຫົວໜ້າຫ້ອງການ

ກະຊວງການເງິນ ຫ້ອງການ

ສົມບູນ ອິນທະປັດຖາ

ສອບຖາມຂໍ້ມູນ:
22249499, 97459789
54230093, 96644515